# ບົດອອກຂ່າວ

**ນະຄອນຫຼວງວຽງຈັນ, ສປປ ລາວ (3 ກໍລະກົດ 2024) — ກະຊວງແຜນການ ແລະ ການລົງທຶນ ແລະ ອົງການສະຫະປະຊາຊາດ ໄດ້ຈັດກອງປະຊຸມປະທານ ແລະ ປະທານຮ່ວມ ຂອງໜ່ວຍງານຂະແໜງການ ຈາກບັນດາກະຊວງ ແລະ ຄູ່ຮ່ວມພັດທະນາ. ໂດຍການເປັນປະທານຂອງ ທ່ານ ນາງ ພອນວັນ ອຸທະວົງ ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ແລະ ເປັນປະທານຮ່ວມໂດຍ ທ່ານ ບັກໂຄເດັຍ ເບີຄານອບ ຜູ້ປະສານງານອົງການ ສປຊ  ປະຈຳ ສປປ ລາວ , ມີບັນດາທ່ານຮອງລັດຖະມົນຕີຈາກ ກະຊວງສາທາລະນະສຸກ, ກະຊວງກະສິກຳ ແລະ ປ່າໄມ້, ບັນດາທ່ານເອກອັກຄະລັດຖະທູດ, ຜູ້ຕາງໜ້າຈາກສະຖານທູດ ແລະ ຫົວໜ້າອົງການສາກົນ ເຂົ້າຮ່ວມ. ກອງປະຊຸມນີ້ ເປັນກອງປະຊຸມຄັ້ງທຳອິດຂອງບັນດາປະທານ ແລະ ປະທານຮ່ວມຂອງ ໜ່ວຍງານຂະແໜງການ ເພື່ອປຶກສາຫາລືເຊິ່ງກັນ ແລະ ກັນ ກ່ຽວກັບວຽກງານການຮ່ວມມືເພື່ອພັດທະນາຢ່າງມີປະສິດທິຜົນ ແລະວິທີການເຮັດວຽກຂອງໜ່ວຍງານຂະແໜງການປະກອບສ່ວນເຂົ້າໃນວາລະການພັດທະນາລວມຂອງປະເທດ. ກອງປະຊຸມຄັ້ງນີ້ຍັງເປັນໂອກາດເພື່ອໃຫ້ໄດ້ການແລກປ່ຽນຄວາມເຂົ້າໃຈຮ່ວມກ່ຽວກັບການກະກຽມກອງປະຊຸມໂຕະມົນ ປະຈຳປີ 2024 ທີ່ຈະຈັດຂຶ້ນໃນເດືອນພະຈິກ 2024.**

ທ່ານ ນາງ ພອນວັນ ອຸທະວົງ ຮອງລັດຖະມົນຕີກະຊວງແຜນການ ແລະການລົງທຶນ ໄດ້ກ່າວໃຫ້ຮູ້ວ່າ: ນີ້ແມ່ນໂອກາດທີ່ບັນດາກະຊວງ ແລະ ຄູ່ຮ່ວມມືພັດທະນາ ທີ່ເປັນປະທານ ແລະ ເປັນປະທານຮ່ວມ ໜ່ວຍງານຂະແໜງການ ຈະໄດ້ຮັບຟັງບົດລາຍງານກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດຂະບວນການໂຕະມົນ ປະຈຳປີ 2024,ນຳສະເໜີຮ່າງຂະບວນການ ແລະກຳນົດເວລາຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ X (2026-2030), ຮ່າງແນວຄວາມຄິດກອງປະຊຸມໂຕະມົນ ປະຈຳປີ 2024. ປະທານຮ່ວມກອງປະຊຸມ, ທ່ານ ບັກໂຄເດັຍ ເບີຄານອບ ຜູ້ປະສານງານອົງການ ສປຊ  ປະຈຳ ສປປ ລາວ ໄດ້ເນັ້ນໜັກເຖິງສິ່ງທີ່ຮອງລັດຖະມົນຕີໄດ້ຍົກໃຫ້ເຫັນ ແລະເນັ້ນໜັກເຖິງຄວາມສຳຄັນຂອງບຸລິມະສິດອັນແຫຼມຄົມໃນການນຳມາໃຊ້ໃຫ້ດີທີ່ສຸດຂອງທຸກແຫຼ່ງທຶນເພື່ອການພັດທະນາລວມທັງການຊ່ວຍເຫຼືອທາງການເພື່ອການພັດທະນາ ໂດຍເລີ່ມແຕ່ສິ່ງທ້າທາຍໃໝ່ ໃນເມື່ອບັນດາປະເທດອ້ອມຂ້າງ, ໂລກກຳລັງປະເຊີນກັບຄ່າໃຊ້ຈ່າຍທີ່ເພີ່ມຂຶ້ນຢ່າງໄວວາຂອງສິ່ງຈຳເປັນປະຈຳວັນ ແລະຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ການເງິນ ທີ່ປະເທດເຮົາກຳລັງປະເຊີນແມ່ນເປັນທີ່ຮູ້ຈັກໂດຍພວກເຮົາທຸກຄົນ, ດັ່ງນັ້ນມື້ນີ້ພວກເຮົາໃຊ້ເວລາເພື່ອທົບທວນຄືນບົດຮຽນທີ່ພວກເຮົາໄດ້ຮຽນຮູ້ຈາກປີທີ່ຜ່ານມາແລະ ການທົບທວນຄືນກ່ຽວກັບສິ່ງທີ່ເຮັດວຽກໄດ້ດີພາຍໃຕ້ໜ່ວຍງານຂະແໜງການ, ພື້ນທີ່ ທີ່ໄດ້ຮັບການຍົກຂຶ້ນມາເປັນທ່າແຮງທີ່ໄດ້ຮັບຜົນປະໂຫຍດຈາກການສົ່ງເສີມ ແລະແນວຄວາມຄິດກ່ຽວກັບວິທີທີ່ເປັນໄປໄດ້ໃນຕໍ່ໜ້າ.

ໃນກອງປະຊຸມ, ກົມແຜນການ, ກະຊວງແຜນການ ແລະການລົງທຶນ ໄດ້ສະເໜີບົດລາຍງານທີ່ສຳຄັນກ່ຽວກັບຂະບວນການ ແລະ ກຳນົດເວລາ ໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ 10 (2026-2030), ກົມການຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ ໄດ້ນຳສະເໜີກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດຂະບວນການໂຕະມົນ ປະຈຳປີ 2024 ແລະຮ່າງແນວຄວາມຄິດກອງປະຊຸມໂຕະມົນ ປະຈຳປີ 2024. ຈາກນັ້ນ, ກໍ່ໄດ້ເປີດເວທີໃຫ້ມີການແລກປ່ຽນ ປຶກສາຫາລື ໃຫ້ແກ່ແຂກຜູ້ເຂົ້າຮ່ວມທັງໝົດ. ຈຸດເດັ່ນທີ່ສຳຄັນຈາກກອງປະຊຸມໃນມື້ນີ້

ແມ່ນຄວາມສຳຄັນຂອງວຽກງານຂອງໜ່ວຍງານຂະແໜງການ ແລະການເຊື່ອມໂຍງທີ່ດີຂອງກອງປະຊຸມໂຕະມົນ ແລະການຈັດຕັ້ງປະຕິບັດພາຍໃຕ້ກອບຂອງຂະບວນການໂຕະມົນ.